ຈົດໝາຍເຖິງພໍ່ແມ່[ *to be used at a general education piece, put on your school's letterhead*]

ເຖິງພໍ່ແມ່ທີ່ຮັກແພງ,

ດັ່ງທີ່ພວກທ່ານໄດ້ຮູ້ແລ້ວວ່າ,
ພວກເຮົາກຳລັງກ້າວເຂົ້າສູ່ຣະດູໄຂ້ຫວັດແລະການກັບມາຂອງໄຂ້ຫວັດໃຫຍ່ທີ່ລືກັນວ່າໄຂ້ຫວັດ H1N1.
ພະຍາດນີ້ແມ່ນແຜ່ພາຍໄດ້ງ່າຍຈາກຄົນໜຶ່ງຫາຄົນໜຶ່ງ. ສະນັ້ນ,
ພວກເຮົາກຳລັງລົງມືອອກບາດກ້າວໃນການລຸດຜ່ອນການແຜ່ພາຍໂຣກໄຂ້ຫວັດນີ້ໃນໂຮງຮຽນ [*ຊື່ຂອງໂຮງຮຽນ*
ພວກເຮົາຢາກເປີດໂຮງຮຽນແກ່ນັກຮຽນທັງຫລາຍ ແລະເຮັດວຽກໄປຕາມປົກກະຕິໃນຊ່ວງຣະດູໄຂ້ຫວັດນີ້. ແຕ່,
**ພວກເຮົາຕ້ອງໄດ້ຮັບການຊ່ອຍເຫລືອຈາກພວກທ່ານໃນການເຮັດເຣື່ອງນີ້ໃຫ້ໄດ້.**

ພວກເຮົາກຳລັງເຮັດວຽກຢ່າງໃກ້ສິດກັບກົມສາທາຣະນະສຸກຂອງພອກຄາວຕີ້, ໂຮງຮຽນຕ່າງໆໃນພວກຄາວຕີ້,
ແລະສຶກສາແຂວງຂອງຣັດໄອໂອວາເພື່ອຄວບຄຸມເງື່ອນໄຂຕ່າງໆຂອງໂຣກໄຂ້ຫວັດນີ້
ແລະທຳການຕັດສິນໃຈໃນຂັ້ນປະຕິບັດການທີ່ດີສຸດຕໍ່ຄວາມຂ້ອງໃຈກ່ຽວກັບໂຮງຮຽນທັງຫລາຍ.
ເມື່ອຫາກມີຂ່າວເກີດຂື້ນແນວໃດ ພວກເຮົາກໍ່ຈະແຈ້ງຂ່າວຄືບໜ້ານັ້ນໃຫ້ພວກທ່ານໄດ້ຊາບທັນທີໂລດ.

ດຽວນີ້ພວກເຮົາກຳລັງພະຍາຍາມເຮັດທຸກສິ່ງຢ່າງຕາມຄວາມສາມາດ
ເພື່ອໃຫ້ໂຮງຮຽນເປີດເປັນປົກກະຕິຕາມເຄີຍ. ນີ້ຄືສອງສາມຢ່າງເປັນສິ່ງທີ່ທ່ານສາມາດຊ່ອຍເຮັດນຳໄດ້.

**ໃຫ້ຮູ້ຈັກສັນຍານແລະອາການຕ່າງໆຂອງໄຂ້ຫວັດ.** ອາການຂອງໄຂ້ຫວັດຮວມເຖິງອາການໄຂ້ຕົວຮ້ອນເຖິງ (100 ອົງສາຟາເຣັນໄຮ, 37.8 ດີກຣີເຊລຊັສຫລືສູງກວ່າ), ໄອ, ເຈັບຄໍ, ຂີ້ມູກຍ້ອຍຫລືຕັນດັງ, ເຈັບຄີງ, ເຈັບຫົວ, ແລະຮູ້ສຶກເມື່ອຍຫລາຍ. ບາງຄົນອາດລົງທ້ອງຫລືຮາກນຳ.

**ຢ່າສົ່ງເດັກໄປໂຮງຮຽນຖ້າເຂົາເຈົ້າຫາກບໍ່ສະບາຍ.**
ເດັກຄົນໃດກໍ່ຕາມຖ້າເຫັນວ່າເຂົາເຈົ້າບໍ່ສະບາຍຕອນເຂົ້າໂຮງຮຽນຢູ່ນັ້ນ ກໍ່ຈະຖືກສົ່ງກັບບ້ານ. ໃຫ້ຕຽມແຜນໄວ້ລ່ວງໜ້າໃນກໍຣະນີທີ່ທ່ານຕ້ອງໄດ້ຢູ່ບ້ານເວລາເດັກບໍ່ສະບາຍ.

**ໃຫ້ເດັກທີ່ບໍ່ສະບາຍນັ້ນຢູ່ບ້ານ** ຢ່າງໜ້ອຍ 24 ຊົ່ວໂມງພາຍຫລັງທີ່ເຊົາໄຂ້ແລ້ວຫລືບໍ່ມີອາການໄຂ້, *ໂດຍທີ່ບໍ່ໄດ້ໃຊ້ຢາດີໄຂ້*. **ການທີ່ໃຫ້ເດັກທີ່ບໍ່ສະບາຍນັ້ນຢູ່ບ້ານນັ້ນ ຈະເປັນການລຸດຜ່ອນຈຳນວນຄົນອື່ນໆທີ່ອາດຈະຕິດເຊື້ອນຳ.**

**ໃຫ້ສອນເດັກຂອງທ່ານໃຫ້ລ້າງມືຢູ່ເລື້ອຍ** ກັບສະບູແລະນ້ຳຫລືຮຸກມືດ້ວຍເຫລົ້າຢາລ້າງມື. ທ່ານສາມາດເປັນຕົວຢ່າງທີ່ດີໃນການເຮັດເຊັ່ນນີ້ເອງຄືກັນ.

**ສອນເດັກຂອງທ່ານບໍ່ໃຫ້ຮ່ວມໃຊ້ຂອງໃຊ້ສ່ວນຕົວ** ເຊັ່ນຮ່ວມແບ່ງກັນດື່ມ, ຮ່ວມກິນອາຫາຖ້ວຍບ່ວງດຽວກັນທີ່ບໍ່ໄດ້ລ້າງ.

**ສອນເດັກຂອງທ່ານໃຫ້ອັດປາກເວລາໄອແລະອັດດັງເວລາຈາມໂດຍໃຊ້ເຈັ້ຽເຊັດມື.** ຖ້າເວລາບໍ່ມີເຈັ້ຽເຊັດມື ໃຫ້ອັດປາກຕອນໄອຫລືອັດດັງຕອນຈາມດ້ວຍແຂນສອກ, ແຂນ, ຫລືແຂນເສື້ອແທນທີ່ຈະໃຊ້ມື.

ໃນຖານະເປັນພໍ່ແມ່  ມັນສຳຄັນທີ່ທ່ານຕ້ອງຢູ່ໃນສຸຂະພາບທີ່ດີ ເພື່ອວ່າທ່ານຈະໄດ້ຄຸ້ມຄອງເດັກຂອງທ່ານ. ເຖິງວ່າການສັກຢາປ້ອງກັນຫວັດນັ້ນບໍ່ສາມາດປ້ອງກັນໄຂ້ຫວັດໃຫຍ່ H1N1 ມັນກໍ່ຍັງປ້ອງການທ່ານຈາກຫວັດຣະດູການໄດ້ແລະການມີສຸຂະພາບດີມັນຈະສາມາດຕ້ານທານກັບຄວາມເຈັບເປັນຢ່າງອື່ນໄດ້ອີກ.

[*ໃຫ້ສອດບົດເຂົ້ານີ້  ຖ້າໂຮງຮຽນຂອງທ່ານທາກອຸບປະຖຳການສັກຢາກັນຫວັດ*]
ເພື່ອເປັນການຊ່ອຍໃຫ້ຮັບການສັກຢາກັນຫວັດຣະດູການງ່າຍຂື້ນ [*ໂຮງຮຽນ*]
ຈະເປັນເຈົ້າພາບຫ້ອງພະຍາບານສັກຢາກັນຫວັດແກ່ນັກຮຽນ,  ພໍ່ແມ່,  ອ້າຍເອື້ອຍນ້ອງແລະນາຍຄູທັງຫລາຍ. ທ່ານຈະໄດ້ຮັບຂ່າວເພີ່ມເຕີມເຣື່ອງຫ້ອງສັກຢາເຫລົ່ານີ້ ໃນອາທິດຕໍ່ໆໄປ.

ເພື່ອໄດ້ຮັບຂ່າວເພີ່ມເຕີມເຣື່ອງໄຂ້ຫວັດໃນເຂດຊຸມຊົນຂອງທ່ານແລະໂຮງຮຽນໃດໃຫ້ການສັກຢາ, ໃຫ້ຢ້ຽມຢາມແວບໄຊທ໌ທີ່: www.polkcountyiowa.gov/health ຫລືໂທເລກ   515 286-3798. ພວກເຮົາຈະແຈ້ງໃຫ້ທ່ານຊາບຖ້າມີການປ່ຽນແປງຕ່າງໆເພີ່ມເຕີມຕໍ່ນະໂຍບາຍຂອງໂຮງຮຽນພວກເຮົາໃນການປ້ອງກັນການແຜ່ພາຍຂອງໄຂ້ຫວັດນີ້.

ດ້ວຍຄວາມຈິງໃຈ,

[*ຊື່ແລະລາຍເຊັນຂອງອຳນາດການປົກຄອງໂຮງຮຽນ*]